ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

0870

ເລກທີ:..................... /ກຄພນ.ຄວພ

ນະຄອນຫຼວງວຽງຈັນ, ວັນທີ: 09.........ກໍລະກົດ 2018

# ຂໍ້ຕົກລົງ

## ວ່າດ້ວຍ ການແຕ່ງຕັ້ງພະນັກງານ ລົງເຮັດວຽກຢູ່ຂອບເຂດນະຄອນຫຼວງວຽງຈັນ ເພື່ອເກັບກຳຂໍ້ມູນສະພາບການເໜັງຕີງເພີ່ມຂຶ້ນຂອງລາຄາສິນຄ້າປະເພດເຂົ້າ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມການຄ້າພາຍໃນ, ເລກທີ 1753/ອຄ, ວັນທີ 19 ກັນຍາ 2016.
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ສະບັບເລກທີ 474/ນຍ, ວັນທີ 18 ພະຈິກ 2010.
- ອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍກຳນົດໝາຍໃຊ້ຈ່າຍງົບປະມານຂອງລັດ, ເລກທີ 2066/ກງ, ວັນທີ 25 ມິຖຸນາ 2015.
- ອີງຕາມທິດຊີ້ນຳຂອງ ທ່ານ ຮອງລັດຖະມົນຕີ ຜູ້ຊີ້ນຳວຽກງານການຄ້າພາຍໃນ, ຄັ້ງວັນທີ 22 ມິຖຸນາ 2018, ຕໍ່ບົດລາຍງານ ເລກທີ 0795/ກຄພນ.ຄວພ, ວັນທີ 22 ມິຖຸນາ 2018.

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

ມາດຕາ 01: ແຕ່ງຕັ້ງພະນັກງານ ລົງເກັບກຳສະພາບ ເພື່ອເປັນຂໍ້ມູນໃນການຄົ້ນຄວ້າບັນຫາການເໜັງຕີງເພີ່ມຂຶ້ນຂອງລາຄາເຂົ້າ ໃນຂອບເຂດນະຄອນຫຼວງວຽງຈັນ ນັບແຕ່ຂອດໂຮງສີຮອດຂອດຕະຫຼາດ (ຂອດຂາຍຍົກ-ຂາຍຍ່ອຍ) ໃນລະຫວ່າງວັນທີ 11-13 ກໍລະກົດ 2018, ກຳນົດເວລາ 03 ວັນ, ຊຶ່ງປະກອບມີລາຍຊື່ລຸ່ມນີ້:

1.1 ຄະນະທີ 1: ລົງເກັບກຳຂໍ້ມູນຢູ່ເມືອງ: **ຈັນທະບູລີ, ສີສັດຕະນາກ ແລະ ຫາດຊາຍຟອງ;**

| | | | |
|---|---|---|---|
| 1. ຕາງໜ້າຈາກພະແນກ ຄົ້ນຄວ້າ, ວິໄຈ ແລະ ພະຍາກອນ | | 01 ທ່ານ | ເປັນຫົວໜ້າຄະນະ; |
| 2. ຕາງໜ້າພະແນກຄຸ້ມຄອງສິນຄ້າ ແລະ ລາຄາ | | 01 ທ່ານ | ເປັນຮອງຄະນະ; |
| 3. ຕາງໜ້າພະແນກຄຸ້ມຄອງ ແລະ ພັດທະນາຕາໜ່າງການຄ້າ | | 01 ທ່ານ | ເປັນຄະນະ; |
| ລວມທັງໝົດ | = | 03 ທ່ານ | |

1.2 ຄະນະທີ 2: ລົງເກັບກຳຂໍ້ມູນຢູ່ເມືອງ: ໄຊທານີ, ເມືອງໄຊເສດຖາ ແລະ ເມືອງປາກງື່ມ;

| | | | |
|---|---|---|---|
| 1. ຕາງໜ້າຈາກພະແນກ ຄົ້ນຄວ້າ, ວິໄຈ ແລະ ພະຍາກອນ | | 01 ທ່ານ | ເປັນຫົວໜ້າຄະນະ; |
| 2. ຕາງໜ້າພະແນກຄຸ້ມຄອງສິນຄ້າ ແລະ ລາຄາ | | 01 ທ່ານ | ເປັນຮອງຄະນະ; |
| 3. ຕາງໜ້າພະແນກຄຸ້ມຄອງ ແລະ ພັດທະນາຕາໜ່າງການຄ້າ | | 01 ທ່ານ | ເປັນຄະນະ; |
| ລວມທັງໝົດ | = | 03 ທ່ານ | |

1.3 ຄະນະທີ 3: ລົງເກັບກຳຂໍ້ມູນຢູ່ເມືອງ: **ສີໂຄດຕະບອງ, ນາຊາຍທອງ ແລະ ເມືອງສັງທອງ;**

| | | |
|---|---|---|
| 1. ຕາງໜ້າຈາກພະແນກ ຄົ້ນຄວ້າ, ວິໄຈ ແລະ ພະຍາກອນ | 01 ທ່ານ | ເປັນຫົວໜ້າຄະນະ; |
| 2. ຕາງໜ້າພະແນກຄຸ້ມຄອງສິນຄ້າ ແລະ ລາຄາ | 01 ທ່ານ | ເປັນຮອງຄະນະ; |
| 3. ຕາງໜ້າພະແນກຄຸ້ມຄອງ ແລະ ພັດທະນາຕາໜ່າງການຄ້າ | 01 ທ່ານ | ເປັນຄະນະ; |
| ລວມທັງໝົດ = | 03 ທ່ານ | |

1.4 ການລົງຈັດຕັ້ງປະຕິບັດຕົວຈິງແມ່ນໃຫ້ປະສານສົມທົບກັບ ພະແນກ ອຄ ນະຄອນຫຼວງ ແລະ ຫ້ອງການ ອຄ ເມືອງ ທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃນການລົງເກັບກຳຂໍ້ມູນ.

ມາດຕາ 02: ສຳລັບຄ່າໃຊ້ຈ່າຍຕ່າງໆໃນການລົງເກັບກຳຂໍ້ມູນ ສຳລັບພະນັກງານຈາກກົມການຄ້າພາຍໃນ ແມ່ນນຳໃຊ້ເງິນຮ່ວງບໍລິຫານຂອງກົມ ຊຶ່ງອ່າອີງຕາມການຄິດໄລ່ ແມ່ນລວມຍອດລາຍຈ່າຍທັງໝົດ: **2,101,150** ກີບ (ລາຍລະອຽດມີເອກະສານຄັດຕິດ). ສ່ວນພະນັກງານພະແນກ ອຄ ນະຄອນຫຼວງ ແລະ ຫ້ອງຫານການຄ້າເມືອງ ແມ່ນ ສະເໜີໃຫ້ພາກສ່ວນກ່ຽວຂ້ອງເປັນຜູ້ຮັບຜິດຊອບ.

ມາດຕາ 03: ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 04: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ກົມການຄ້າພາຍໃນ

ບຸນທຽນ ແກ້ວສີພາ